# ການຮັບຮູ້ສິດ ແລະ ການຄຸ້ມຄອງທີ່ດິນ ຂອງປະຊາຊົນຕາມປະເພນີ




## ສິດໃຊ້ທີ່ດິນຕາມປະເພນີ

ສິດໃຊ້ທີ່ດິນຕາມປະເພນີແມ່ນການປົກປັກຮັກສາ ແລະ ໃຊ້ທີ່ດິນ ດ້ວຍການບຸກເບີກພັດທະນາທີ່ດິນ ຫຼື ຕາມການຈັດສັນຂອງລັດມາເປັນປົກກະຕິ, ຕໍ່ເນື່ອງ ແລະ ຍາວນານມາຮອດປັດຈຸບັນ ໂດຍບໍ່ມີເອກະສານຢັ້ງຢືນ ສິດໃຊ້ຂອງຜູ້ກ່ອນ, ການຈັດຕັ້ງ ແລະ ລວມບ້ານ.

ລັດຮັບຮູ້ສິດໃຊ້ທີ່ດິນຕາມປະເພນີຂອງບຸກຄົນ, ການຈັດຕັ້ງ ຫຼື ຂອງລວມບ້ານດ້ວຍການອອກໃບຕາດິນ ຫຼື ໃບແຜນທີ່ດິນ ຫຼື ໃບຢັ້ງຢືນທີ່ດິນ ໃຫ້ແຕ່ລະກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ໂດຍການຮ້ອງຂໍຂຶ້ນທະບຽນທີ່ດິນບົນພື້ນຖານການຄຸ້ມຄອງທີ່ດິນ.

ການຮ້ອງຂໍຂຶ້ນທະບຽນທີ່ດິນ ຕ້ອງປະກອບເອກະສານຢັ້ງຢືນເຄົ້າມູນທີ່ດິນ, ພະຍານ, ຜູ້ໄດ້ຮັບສິດນຳໃຊ້ທີ່ດິນຂ້າງຄຽງ ແລະ ອົງການປົກຄອງບ້ານ ບ່ອນທີ່ດິນຕັ້ງຢູ່.

(ມາດຕາ26 ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 88/ນຍ, ລົງວັນທີ 3/6/2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ )

## ການນຳໃຊ້ປ່າໄມ້ຕາມປະເພນີ

ການນຳໃຊ້ປ່າໄມ້ຕາມປະເພນີ ແມ່ນການຊົມໃຊ້ປ່າໄມ້ ແລະ ຜະລິດຕະພົນປ່າໄມ້ ທີ່ເຄີຍປະຕິບັດກັນມາໂດຍສອດຄ່ອງກັບລະບຽບກົດໝາຍ, ລັດອະນຸຍາດໃຫ້ຊົມໃຊ້ໄມ້ ແລະ ເກັບກູ້ຜະລິດຕະພົນປ່າໄມ້ປະເພດບໍ່ຫວງຫ້າມ ເພື່ອຊົມໃຊ້ໃນຄອບຄົວແຕ່ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ປ່າໄມ້, ຊັບພະຍາກອນປ່າໄມ້, ສິ່ງແວດລ້ອມ ແລະ ບໍ່ແຕະຕ້ອງເຖິງສິດຜົນປະໂຫຍດຂອງບຸກຄົນ ແລະ ການຈັດຕັ້ງອື່ນ.

ການຊົມໃຊ້ປ່າໄມ້ ແລະ ຜະລິດຕະພົນປ່າໄມ້ຕາມປະເພນີ ແມ່ນຕ້ອງປະຕິບັດຕາມແຜນຈັດສັນ ແລະ ກົດລະບຽບຂອງບ້ານທີ່ສອດຄ່ອງກັບກົດລະບຽບກົດໝາຍປ່າໄມ້.

(ມາດຕາ42 ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ ລົງວັນທີ24/ 12/ 2007)


ບ້ານໂພນສະຫວັນໃຕ້ , ໜ່ວຍ 14, ເຮືອນເລກທີ 207, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ຕິດຕໍ່ພວກເຮົາໄດ້ທີ່ : info@rightslinklao.org; ໂທ: +85621 312519 , +85621 315841 ; ແຟກ: +85621 350 740
ເວບໄຊ : www.rightslinklao.org


ສະແກນສຳລັບ ພາສາທ້ອງຖິ່ນ